ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

## ຜ-ຟຟລ ຮັບລາງວັນ ASEAN Business AWARD (ABA) 2017

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຮັບລາງວັນ ASEAN Business AWARD (ABA) ປະຈໍາປີ 2017, ເຊິ່ງພິທີມອບຮັບຈັດຂຶ້ນໃນວັນທີ 06/09/2017 ທີ່ ປະເທດຟີລິປິນ, ຄຽງຄູ່ກັບລາງວັນ ABA 2017 ພາຍໃນງານຍັງໄດ້ມີການມອບລາງວັນພິເສດຄືລາງວັນ The Legacy Award ເຊິ່ງເປັນລາງວັນສໍາລັບຜູ້ ປະກອບການດີເດັ່ນ ຫຼື ບໍລິສັດ ທີ່ມີການຂະຫຍາຍຕົວ ພ້ອມທັງເປັນສ່ວນໜຶ່ງໃນການປະກອບສ່ວນໃນທາງບວກ ເພື່ອສົ່ງເສີມການພັດທະນາປະຊາຄົມເສດຖະກິດອາຊຽນ.

ສໍາລັບລາງວັນ ASEAN Business AWARD (ABA) ຈັດຂຶ້ນທຸກໆປີ, ເຊິ່ງລາງວັນດັ່ງກ່າວນີ້ແມ່ນໄດ້ມອບໃຫ້ພາກສ່ວນທີ່ມີຜົນງານດີເດັ່ນ ແລະ ໜ້າເຊື່ອຖືໃນການດໍາເນີນທຸລະກິດໃນຂະແໜງ ການຕ່າງໆທີ່ປະສົບຜົນສໍາເລັດ, ເຊິ່ງບໍລິສັດ ໄດ້ກາຍເປັນບໍລິສັດນໍາໜ້າອັນດັບໜຶ່ງຂອງ ສປປ ລາວ ເພື່ອໃຫ້ການຮັບປະກັນທີ່ມີປະສິດຕິພາບ ແລະ ຕອບສະໜອງໃຫ້ທັນເວລາກັບຄວາມຕ້ອງການໃນການພັດທະນາເສດຖະກິດສັງຄົມໃນ ສປປ ລາວ, ທັງນີ້ບໍລິສັດຍັງໄດ້ເລັ່ງໃຫ້ເຫັນເຖິງກຸ່ມຜູ້ດໍາເນີນທຸລະກິດໃນຂົງເຂດພາກພື້ນອາຊີ ແລະ ບັນດານັກລົງທຶນໃນທົ່ວໂລກ ດັ່ງນັ້ນສະພາທີ່ປຶກສາເສດຖະກິດອາຊຽນ ຫຼື ASEAN Business Advisory council ຈຶ່ງໄດ້ເຫັນຄວາມສໍາຄັນຂອງພາກສ່ວນຕ່າງໆ ແລະ ໄດ້ໃຫ້ການຍ້ອງຍໍຊົມເຊີຍຜົນສໍາເລັດຂອງບັນດາຂະແໜງການຕ່າງໆທີ່ພົ້ນເດັ່ນໃນທຸກໆປີ. ຂໍ້ມູນເພີ່ມຕື່ມທ່ານສາມາດ ອ່ານລາຍລະອຽດໄດ້ທີ່: www.asean-bac.corg; http://aseanbac.ph/

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ ຕູ້ປ.ນ.2392
ໂທລະສັບ: (856 21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la, ເວັບໄຊສ: www.edlgen.com.la